**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ                                        ເລກທີ 233 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 23 ມັງກອນ 2023

# ຂໍ້ຕົກລົງ
# ວ່າດ້ວຍ ການຄຸ້ມຄອງອອກແບບ, ກໍ່ສ້າງ ແລະ ສ້ອມແປງ
# ໃນຂະແໜງການສຶກສາທິການ ແລະ ກິລາ

- ອີງຕາມ ກົດໝາຍວ່າດ້ວຍ ການກໍ່ສ້າງ ສະບັບເລກທີ 05/ສພຊ, ລົງວັນທີ 26 ພະຈິກ 2009;
- ອີງຕາມ ກົດໝາຍວ່າດ້ວຍ ການຜັງເມືອງ (ສະບັບປັບປຸງ) ສະບັບເລກທີ 40/ສພຊ, ລົງວັນທີ 16 ພະຈິກ 2017;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ໜັງສືສະເໜີຂອງກົມການເງິນ ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 032/ກງ, ລົງວັນທີ 13 ມັງກອນ 2023.

## ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງອອກແບບ, ກໍ່ສ້າງ ແລະ ສ້ອມແປງ ໃນຂະແໜງການສຶກສາທິການ ແລະ ກິລາ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ວຽກງານ ໃຫ້ມີຄວາມເປັນເອກະພາບ ແນໃສ່ຮັບປະກັນການສຳຫຼວດອອກແບບ, ກໍ່ສ້າງ ແລະ ສ້ອມແປງ, ການຕິດຕາມກວດກາການປຸກສ້າງທຸກປະເພດ ໃຫ້ຖືກຕາມເປົ້າໝາຍ, ມີຄຸນນະພາບ ໄດ້ມາດຕະຖານເຕັກນິກທີ່ກຳນົດໄວ້, ມີຄວາມປອດໄພ, ຮັກສາສະພາບແວດລ້ອມ ແລະ ສະຖາປັດຕະຍະກຳ ຂອງວັດທະນະທຳລາວ ປະກອບສ່ວນເຂົ້າໃນການພັດທະນາວຽກງານການສຶກສາ, ການຄົ້ນຄວ້າວິທະຍາສາດ ແລະ ກິລາ-ກາຍຍະກຳ.

**ມາດຕາ 2 ການຄຸ້ມຄອງອອກແບບ, ກໍ່ສ້າງ ແລະ ສ້ອມແປງ**

ການຄຸ້ມຄອງອອກແບບ, ກໍ່ສ້າງ ແລະ ສ້ອມແປງ ແມ່ນຂະບວນການຈັດຕັ້ງປະຕິບັດການຄົ້ນຄ້ວາ ພິຈາລະນາກວດຜ່ານ ແລະ ຮັບຮອງກ່ຽວກັບການອະນຸຍາດໃສ່ແບບເຕັກນິກຕ່າງໆ, ໃບປະເມີນມູນຄ່າ ການກໍ່ສ້າງ ແລະ ສ້ອມແປງ, ການກຳນົດ ເງື່ອນໄຂ ແລະ ມາດຕະຖານເຕັກນິກ, ການນຳໃຊ້ວັດສະດຸກໍ່ສ້າງ, ສັນຍາ ການກໍ່ສ້າງ, ຕິດຕາມກວດກາ ແລະ ປະເມີນຜົນການກໍ່ສ້າງ ແລະ ສ້ອມແປງ ໃຫ້ຖືກຕ້ອງຕາມການອະນຸຍາດ ຕາມການແບ່ງ ຂັ້ນຄຸ້ມຄອງຂອງຂະແໜງການສຶກສາທິການ ແລະ ກິລາ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບຕ່າງໆ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການດຳເນີນກິດຈະການກໍ່ສ້າງ** ໝາຍເຖິງ ການກຳນົດໂຄງການລົງທຶນການກໍ່ສ້າງ, ການດຳເນີນ ວຽກງານກໍ່ສ້າງ ແລະ ສ້ອມແປງ ໂດຍເລີ່ມຈາກການສຶກສາຄວາມເປັນໄປໄດ້, ການສຳຫຼວດ, ການອອກແບບ, ການ ກໍ່ສ້າງ, ການສ້ອມແປງ, ການຄວບຄຸມ ແລະ ການຕິດຕາມກວດກາ ການກໍ່ສ້າງຈົນກ້າວໄປເຖິງການສຳເລັດສິ່ງກໍ່ສ້າງ;

2. **ໂຄງການລົງທຶນການກໍ່ສ້າງ** ໝາຍເຖິງ ກິດຈະກຳເພື່ອຈັດຕັ້ງປະຕິບັດການກໍ່ສ້າງປະເພດຕ່າງໆ ໂດຍມີ ຂອບເຂດ, ເປົ້າໝາຍ ແລະ ເງື່ອນໄຂສະເພາະ, ມີການກຳນົດຄວາມຮັບຜິດຊອບ, ມີແຮງງານ ຫຼື ບໍລິສັດຮັບເໝົາ ກໍ່ສ້າງ, ມີງົບປະມານ, ມີແຜນດຳເນີນງານ, ມີການກຳນົດເວລາເລີ່ມຕົ້ນ ແລະ ສິ້ນສຸດໂຄງການ;

3. **ການສຳຫຼວດ** ໝາຍເຖິງ ການເກັບກຳ, ການວັດແທກດິນ, ການວັດແທກພູມີປະເທດ, ການຂຸດເຈາະ ແລະ ວິໄຈ ທຳລະນີເຕັກນິກທີ່ກ່ຽວຂ້ອງ ເພື່ອນຳມາເປັນຂໍ້ມູນອ້າງອີງ ສຳລັບການ ອອກແບບ, ກໍ່ສ້າງ ແລະ ສ້ອມແປງ;

4. **ການອອກແບບ** ໝາຍເຖິງ ການສ້າງແຜນຜັງລະອຽດ ທີ່ຖືກຕ້ອງຕາມມາດຖານເຕັກນິກ ບົນພື້ນຖານ ການວິໄຈຂໍ້ມູນ ທີ່ໄດ້ມາຈາກ ການສຳຫຼວດ ຊຶ່ງປະກອບດ້ວຍ ການສ້າງ ແຜນຜັງສະຖາປັດຕະຍະກຳ, ແຜນຜັງວິສະວະກຳ, ເຕັກນິກຄົບຊຸດ ແລະ ບັນດາຮູບຂະຫຍາຍໃນສ່ວນທີ່ຕ້ອງການຄວາມລະອຽດຊັດເຈນ, ກຳນົດໝາຍເຕັກນິກ, ການປະເມີນມູນຄ່າ ແລະ ກຳນົດເວລາການກໍ່ສ້າງ;

5. **ການກໍ່ສ້າງ** ໝາຍເຖິງ ການນຳໃຊ້ວັດສະດຸກໍ່ສ້າງຕ່າງໆ ປະກອບເຂົ້າກັນເຮັດໃຫ້ມີສິ່ງປຸກສ້າງ ເກີດຂຶ້ນຢູ່ໃນຕອນດິນເປົ່າຫວ່າງ ຫຼື ໃນຕອນດິນທີ່ມີການທຸບມ້າງສິ່ງປຸກສ້າງ ທີ່ມີຢູ່ແລ້ວ;

6. **ການສ້ອມແປງ** ໝາຍເຖິງ ການປັບປຸງ, ດັດແກ້, ແກ້ໄຂສິ່ງທີ່ເປ່ເພ ແລະ ຊຸດໂຊມຂອງສິ່ງກໍ່ສ້າງ ໃຫ້ສາມາດນຳໃຊ້ງານ;

7. **ການຄວບຄຸມການກໍ່ສ້າງ** ໝາຍເຖິງ ການຕິດຕາມ, ການກວດກາ ທາງດ້ານວິຊາການຢູ່ໃນຂະບວນການກໍ່ສ້າງ ຢ່າງເປັນປົກກະຕິຂອງສະຖາປະນິກ ຫຼື ວິສະວະກອນ ແນໃສ່ຮັບປະກັນໃຫ້ສິ່ງກໍ່ສ້າງມີຄຸນນະພາບ, ຖືກຕ້ອງ ຕາມການອອກແບບ, ມາດຕະຖານເຕັກນິກ, ກຳນົດເວລາ ແລະ ງົບປະມານຂອງແຕ່ລະໜ້າວຽກ ຢ່າງເຂັ້ມງວດ ພ້ອມທັງຕິດຕາມກວດກາ ຄວາມປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມ.

8. **ແຜນຜັງສະຖາປັດຕະຍະກຳ** ໝາຍເຖິງ ແຜ່ນແຕ້ມ ທີ່ສະແດງໃຫ້ເຫັນ ລັກສະນະ, ຮູບຊົງ, ຂະໜາດ, ສັດສ່ວນ, ວັດສະດຸກໍ່ສ້າງ, ລະດັບໂຄງສ້າງ, ເນື້ອທີ່ ແລະ ການນຳໃຊ້ຊິ້ນສ່ວນຕ່າງໆຂອງໂຄງການກໍ່ສ້າງ;

9. **ແຜນຜັງວິສະວະກຳ** ໝາຍເຖິງ ແຜ່ນແຕ້ມ ທີ່ສະແດງໃຫ້ເຫັນຂະໜາດ, ຈຳນວນ ແລະ ປະລິມານ ຂອງໂຄງປະກອບທາງດ້ານເຕັກນິກ ຂອງໂຄງການກໍ່ສ້າງ ພ້ອມດ້ວຍຮູບຂະຫຍາຍທີ່ຈຳເປັນ.

**ມາດຕາ 4 ຫຼັກການກ່ຽວກັບການຄຸ້ມຄອງອອກແບບ, ກໍ່ສ້າງ ແລະ ສ້ອມແປງ**

ການເຄື່ອນໄຫວວຽກງານຄຸ້ມຄອງອອກແບບ, ກໍ່ສ້າງ ແລະ ສ້ອມແປງ ຂອງຂະແໜງການສຶກສາທິການ ແລະ ກິລາ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍຂອງພັກ, ກົດໝາຍຂອງລັດ, ລະບຽບການ, ບຸດທະສາດ ແລະ ແຜນການພັດທະນາຂະແໜງການສຶກສາທິການ ແລະ ກິລາ;

2. ຮັບປະກັນປົກປັກຮັກສາສິ່ງແວດລ້ອມ, ວັດທະນະທຳ, ເອກະລັກທາງສະຖາປັດຕະຍະກຳ, ສີນລະປະກຳ ໃຫ້ມີຄວາມສວຍງາມ ແລະ ຍືນຍົງ;

3. ຮັບປະກັນການນຳໃຊ້ທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ຜົນປະໂຫຍດໃນການດຳລົງຊີວິດ ຂອງປະຊາຊົນ;

4. ຮັບປະກັນການອອກແບບ, ກໍ່ສ້າງ ແລະ ສ້ອມແປງ ໃຫ້ມີຄຸນນະພາບ, ຄວາມປອດໄພສູງ, ເປັນລະບຽບ ຮຽບຮ້ອຍ ແລະ ບໍ່ສົ່ງຜົນກະທົບທາງລົບ ເກີນຂອບເຂດມາດຕະຖານທີ່ກຳນົດໄວ້;

5. ຮັບປະກັນ ການປະຢັດ, ສະດວກສະບາຍ, ຖືກຕ້ອງ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານການອອກແບບ, ກໍ່ສ້າງ ແລະ ສ້ອມແປງ ລວມທັງການຊ່ວຍເຫຼືອທີ່ດຳເນີນການກໍ່ສ້າງ ໃນຂະແໜງການສຶກສາທິການ ແລະ ກິລາ.

## ໝວດທີ 2
## ການສຳຫຼວດ-ອອກແບບ ແລະ ກຳນົດການນຳໃຊ້ວັດສະດຸກໍ່ສ້າງ

**ມາດຕາ 6 ການສຳຫຼວດ-ອອກແບບ ໂຄງການກໍ່ສ້າງ**

ການສຳຫຼວດໂຄງການກໍ່ສ້າງ ແມ່ນການເກັບຂໍ້ມູນລາຍລະອຽດດ້ານຕ່າງໆ ໃນການກໍ່ສ້າງ ເພື່ອສ້າງເປັນ ບົດວິພາກ ແລະ ການກະກຽມໃຫ້ແກ່ການອອກແບບ ຂອງໂຄງການກໍ່ສ້າງ ໂດຍມີການປະເມີນ ປະສິດທິຜົນ ແລະ ຜົນກະທົບ ທາງດ້ານສິ່ງແວດລ້ອມ, ເສດຖະກິດ-ສັງຄົມ ແລະ ແຜນພັດທະນາການສຶກສາ ແລະ ກິລາ.

ການອອກແບບ ໂຄງການກໍ່ສ້າງ ແມ່ນ ການແຕ້ມ ແລະ ອອກແບບແຜນຜັງການນຳໃຊ້ອາຄານ, ຮູບຊົງ ທາງດ້ານສະຖາປັດຕະຍະກຳ, ວິສະວະກຳ ແລະ ເຕັກນິກຄົບຊຸດ ຂອງຂະແໜງການສຶກສາທິການ ແລະ ກິລາ ໃຫ້ຖືກຕ້ອງຕາມມາດຕະຖານເຕັກນິກການກໍ່ສ້າງ ພ້ອມທັງສົ່ງເສີມການນຳໃຊ້ວັດສະດຸກໍ່ສ້າງພາຍໃນ.

**ມາດຕາ 7 ການກຳນົດ ການນຳໃຊ້ວັດສະດຸກໍ່ສ້າງ**

ກະຊວງສຶກສາທິການ ແລະ ກິລາ ຫຼື ເຈົ້າຂອງໂຄງການ ເປັນຜູ້ກຳນົດ ຄວາມຕ້ອງການເບື້ອງຕົ້ນ ໃຫ້ ບໍລິສັດສຳຫຼວດ-ອອກແບບເຄຫາສະຖານ, ບໍລິສັດທີ່ປຶກສາ ການກໍ່ສ້າງເຄຫາສະຖານ ຫຼື ສະຖາປະນິກ ແລະ

ວິສະວະກອນ ໂຍທາ ທີ່ປະຈຳແຕ່ລະໂຄງການລົງທຶນການກໍ່ສ້າງ ເພື່ອເປັນຂໍ້ມູນໃນການສຳຫຼວດ-ອອກແບບ ແລະ ສົ່ງເສີມການນຳໃຊ້ວັດສະດຸກໍ່ສ້າງຕ່າງໆ ທີ່ມີຢູ່ໃນແຕ່ລະທ້ອງຖິ່ນ ເຂົ້າໃນການກໍ່ສ້າງ ແລະ ສ້ອມແປງ ໃນຂະແໜງການສຶກສາທິການ ແລະ ກິລາ.

ວັດສະດຸກໍ່ສ້າງ ຕ້ອງເປັນວັດສະດຸທີ່ມີຄຸນນະພາບ ສາມາດຮັບປະກັນໄດ້ຄວາມປອດໄພ, ຄວາມທົນທານ ແລະ ອາຍຸການນຳໃຊ້.

## ໝວດທີ 3
## ປະເພດ, ລັກສະນະ, ຂະໜາດ ແລະ ການກຳນົດມາດຕະຖານເຕັກນິກ ການກໍ່ສ້າງ

### ມາດຕາ 8 ປະເພດການກໍ່ສ້າງ

ການກໍ່ສ້າງ ມີ ເກົ້າ ປະເພດ ດັ່ງນີ້:

1. ການກໍ່ສ້າງອາຄານຮຽນ;
2. ການກໍ່ສ້າງຫໍພັກ ນັກຮຽນ, ນັກສຶກສາ ແລະ ພະນັກງານ;
3. ການກໍ່ສ້າງ ສຳນັກງານຫ້ອງການ ຂອງຂະແໜງການສຶກສາທິການ ແລະ ກິລາ;
4. ການກໍ່ສ້າງ ພື້ນຖານໂຄງລ່າງກິລາ-ກາຍຍະກຳ;
5. ການກໍ່ສ້າງເຮືອນຄົວລວມ ຫຼື ໂຮງອາຫານ;
6. ການກໍ່ສ້າງຫໍສະໝຸດ ຫຼື ຫ້ອງອ່ານ;
7. ການກໍ່ສ້າງຫ້ອງທົດລອງ ຫຼື ຫ້ອງຝຶກປະຕິບັດ;
8. ການກໍ່ສ້າງສາງເກັບເຄື່ອງ;
9. ການກໍ່ສ້າງຫ້ອງນ້ຳປະເພດຕ່າງໆ.

### ມາດຕາ 9 ລັກສະນະ ການກໍ່ສ້າງ

ການກໍ່ສ້າງ ມີ ສີ່ ລັກສະນະ ດັ່ງນີ້:

1. ການສ້າງ ແລະ ຕິດຕັ້ງ;
2. ການຕໍ່ເຕີມ ແລະ ປ່ຽນແປງເປົ້າໝາຍການນຳໃຊ້;
3. ການບູລະນະ ແລະ ສ້ອມແປງ;
4. ການທັບມ້າງ ແລະ ຮື້ຖອນ.

### ມາດຕາ 10 ຂະໜາດການກໍ່ສ້າງ

ການກໍ່ສ້າງ ແຕ່ລະປະເພດ ແບ່ງອອກເປັນ ສາມ ຂະໜາດ ດັ່ງນີ້:

1. ຂະໜາດໃຫຍ່ ມີເນື້ອທີ່ 433 ຕາແມັດ (ມ$^2$) ແລະ ອາຄານ ທີ່ມີຄວາມສູງ ສອງຊັ້ນ ຂຶ້ນໄປ;
2. ຂະໜາດກາງ ມີເນື້ອທີ່ 217 ຕາແມັດ (ມ2) ຫາ 432 ຕາແມັດ (ມ2) ແລະ ອາຄານ ໜຶ່ງຊັ້ນ;
3. ຂະໜາດນ້ອຍ ມີເນື້ອທີ່ 216 ຕາແມັດ (ມ2) ແລະ ອາຄານ ໜຶ່ງຊັ້ນ.

ຂະໜາດຂອງການກໍ່ສ້າງແຕ່ລະປະເພດ ແມ່ນຂຶ້ນກັບການແບ່ງຂັ້ນຄຸ້ມຄອງ ໂດຍອີງຕາມມູນຄ່າ, ທີ່ຕັ້ງ, ຄວາມສຳຄັນ ແລະ ມາດຖານເຕັກນິກ ຂອງໂຄງການກໍ່ສ້າງ.

**ມາດຕາ 11 ການກຳນົດມາດຕະຖານເຕັກນິກ ການກໍ່ສ້າງ**

ການກຳນົດມາດຕະຖານເຕັກນິກ ການກໍ່ສ້າງ ແມ່ນ ບັນທັດຖານ, ມາດຕະຖານສົມທຽບ ແລະ ຕົວຊີ້ວັດ ກ່ຽວກັບການກໍ່ສ້າງ ເພື່ອເປັນບ່ອນອີງ ໃນການສ້າງແຜນງົບປະມານ, ຕິດຕາມ, ກວດກາ ແລະ ປະເມີນຜົນ ໂຄງການກໍ່ສ້າງ.

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຄົ້ນຄວ້າ ແລະ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອກຳນົດ ແບບມາດຕະຖານ ແລະ ມາດຕະຖານເຕັກນິກ ສະເພາະຂອງປະເພດການກໍ່ສ້າງ ເຊັ່ນ: ແບບມາດຕະຖານ ອາຄານການສຶກສາ, ຫ້ອງທົດລອງ, ຫ້ອງຝຶກປະຕິບັດ, ຫ້ອງສະໝຸດ, ຫ້ອງອ່ານ, ຫໍພັກ, ຫ້ອງນ້ຳ, ພື້ນຖານ ໂຄງລ່າງກິລາ-ກາຍຍະກຳ ແລະ ເງື່ອນໄຂຮັບຮອງຂອງຂະແໜງການສຶກສາທິການ ແລະ ກິລາ ເພື່ອນຳສະເໜີ ຂັ້ນເທິງພິຈາລະນາຮັບຮອງ, ເຜີຍແຜ່ ແລະ ຊີ້ນຳການຈັດຕັ້ງປະຕິບັດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ສຳລັບການກຳນົດ ແບບມາດຕະຖານ ແລະ ມາດຕະຖານເຕັກນິກ ຂອງປະເພດການກໍ່ສ້າງຕ່າງໆ ມີ ລະບຽບການສະເພາະ.

## ໝວດທີ 4
## ການຂໍອະນຸຍາດ, ການຄົ້ນຄວ້າ, ການປະມູນ ແລະ ສັນຍາ ກ່ຽວກັບການອອກແບບ, ກໍ່ສ້າງ ແລະ ສ້ອມແປງ

**ມາດຕາ 12 ການປະກອບເອກະສານຂໍອະນຸຍາດ ການອອກແບບ, ກໍ່ສ້າງ ແລະ ສ້ອມແປງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຂໍອະນຸຍາດ ຜ່ານແບບ ແລະ ແຜນຜັງກໍ່ສ້າງ ຕ້ອງປະກອບເອກະສານ ດັ່ງນີ້:

1. ໜັງສືສະເໜີຂໍອະນຸຍາດ;
2. ບົດສະເໜີໂຄງການກໍ່ສ້າງ;
3. ບົດສຶກສາຄວາມເປັນໄປໄດ້ຂອງໂຄງການ;
4. ບົດລາຍງານການສຳຫຼວດ-ອອກແບບ;
5. ແບບ ແລະ ແຜນຜັງການກໍ່ສ້າງຄົບຊຸດ;
6. ໃບປະເມີນມູນຄ່າການກໍ່ສ້າງ;
7. ໃບຢັ້ງຢືນການປະເມີນໂຄງການກໍ່ສ້າງ;
8. ໃບຢັ້ງຢືນໄດ້ຮັບສິດນຳໃຊ້ທີ່ດິນ ໃນກໍລະນີມີການນຳໃຊ້ທີ່ດິນຂອງປະຊາຊົນ.

**ມາດຕາ 13 ການຄົ້ນຄວ້າ ການອະນຸຍາດອອກແບບ, ກໍ່ສ້າງ ແລະ ສ້ອມແປງ**

ພາຍຫຼັງທີ່ ພະແນກຄຸ້ມຄອງອອກແບບກໍ່ສ້າງ-ສ້ອມແປງ ຫຼື ໜ່ວຍງານກໍ່ສ້າງຂັ້ນແຂວງ ທີ່ກ່ຽວຂ້ອງ ໄດ້ຮັບເອກະສານຈາກຜູ້ຂໍອະນຸຍາດ ຕ້ອງດໍາເນີນຕາມຂັ້ນຕອນ ດັ່ງນີ້:

1. ກວດສໍານວນເອກະສານຂໍອະນຸຍາດການກໍ່ສ້າງ ເມື່ອເຫັນວ່າຖືກຕ້ອງ ແລະ ຄົບຖ້ວນແລ້ວ ກໍ່ຮັບເອົາເອກະສານເພື່ອພິຈາລະນາ, ຖ້າເຫັນວ່າບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນໃຫ້ສົ່ງຄືນໂດຍມີການແນະນໍາ ໃຫ້ປະກອບຄືນໃໝ່;

2. ພາຍຫຼັງໄດ້ຮັບເອກະສານແລ້ວ ພະແນກຄຸ້ມຄອງອອກແບບກໍ່ສ້າງ ຫຼື ໜ່ວຍງານກໍ່ສ້າງ ຂັ້ນແຂວງ ທີ່ຮັບຜິດຊອບ ຕ້ອງຮີບຮ້ອນຄົ້ນຄ້ວາພິຈາລະນາ ບົນພື້ນຖານລະບຽບການ;

3. ຜ່ານການຄົ້ນຄ້ວາ ຖ້າເຫັນວ່າເອກະສານຂໍອະນຸຍາດປຸກສ້າງຖືກຕ້ອງ ຕ້ອງນໍາສະເໜີຕໍ່ອົງການ ປົກຄອງຂັ້ນຕົ້ນ ພິຈາລະນາອະນຸມັດ ຕາມລໍາດັບ ຖ້າບໍ່ຖືກຕ້ອງ ອົງການຄຸ້ມຄອງທີ່ກ່ຽວຂ້ອງ ຕ້ອງແຈ້ງຜົນຂອງ ການຄົ້ນຄ້ວາເປັນລາຍລັກອັກສອນ ໃຫ້ຜູ້ຂໍອະນຸຍາດຊາບ.

**ມາດຕາ 14 ການປະມູນການ ອອກແບບ, ກໍ່ສ້າງ ແລະ ສ້ອມແປງ**

ການປະມູນການ ອອກແບບ, ກໍ່ສ້າງ ແລະ ສ້ອມແປງ ຕ້ອງມີການແຂ່ງຂັນທາງດ້ານລາຄາ, ຄຸນນະພາບ, ຮັບປະກັນການປະຢັດ, ຄວາມສະເໝີພາບ, ເປີດເຜີຍ, ຄວາມຍຸຕິທໍາ, ໂປ່ງໃສ, ສາມາດກວດສອບໄດ້ ແລະ ສອດຄ່ອງກັບ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ແລະ ລະບຽບການຕ່າງໆທີ່ກ່ຽວຂ້ອງ.

ສໍາລັບເງື່ອນໄຂ ຜູ້ເຂົ້າຮ່ວມການປະມູນ ວຽກການປະມູນການ ອອກແບບ, ກໍ່ສ້າງ ແລະ ສ້ອມແປງ ແມ່ນໄດ້ກໍານົດໄວ້ໃນລະບຽບການສະເພາະ.

**ມາດຕາ 15 ສັນຍາກ່ຽວກັບການ ອອກແບບ, ກໍ່ສ້າງ ແລະ ສ້ອມແປງ**

ກະຊວງສຶກສາທິການ ແລະ ກິລາ ຫຼື ເຈົ້າຂອງໂຄງການ ຕ້ອງເຮັດສັນຍາ ຮ່ວມກັບ ບໍລິສັດສໍາຫຼວດ ອອກແບບ, ບໍລິສັດ ທີ່ປຶກສາ ຫຼື ບໍລິສັດ ຮັບເໝົາກໍ່ສ້າງ ແລະ ສ້ອມແປງ ຕາມແຕ່ລະໜ້າວຽກຂອງໂຄງການ ຕາມເງື່ອນໄຂທີ່ໄດ້ກໍານົດໄວ້ ໃນປະມວນກົດໝາຍແພ່ງ ແລະ ກວດກາ ທາງດ້ານວິຊາການ ຢູ່ໃນຂະບວນການ ກໍ່ສ້າງ ຢ່າງເປັນປົກກະຕິ.

## ໝວດທີ 5
## ການຕິດຕາມ, ກວດກາ ດ້ານເຕັກນິກ ແລະ ປະເມີນຜົນ ການກໍ່ສ້າງ ແລະ ສ້ອມແປງ

**ມາດຕາ 16 ການຕິດຕາມ ການກໍ່ສ້າງ ແລະ ສ້ອມແປງ**

ການຕິດຕາມ ການກໍ່ສ້າງ ແລະ ສ້ອມແປງ ຕ້ອງໄດ້ຜ່ານ ການລົງກວດກາໃນໄລຍະຈັດຕັ້ງ ປະຕິບັດ ໂຄງການກໍ່ສ້າງເພື່ອຄວບຄຸມການປຸກສ້າງໃຫ້ຖືກຕ້ອງຕາມການອະນຸຍາດຂອງຂັ້ນກະຊວງ ແລະ ຂັ້ນແຂວງ ອະນຸມັດ.

ການລົງກວດກາຕ້ອງລົງຢ່າງໜ້ອຍ ສາມ ຄັ້ງ ຄື: ກວດກາໄລຍະຕົ້ນ, ກວດກາໄລຍະກາງ ແລະ ກວດກາໄລຍະທ້າຍ, ການລົງກວດກາແຕ່ລະຄັ້ງ ຕ້ອງໄດ້ເຮັດບົດບັນທຶກກວດກາເຕັກນິກ ເພື່ອເປັນຫຼັກຖານ ຫຼື ບ່ອນອີງໃຫ້ແກ່ການພິຈາລະນາ ໃນການຂໍຊໍາລະສະສາງ.

ສໍາລັບ ການສ້ອມແປງ ໃຫ້ປະຕິບັດຕາມສັນຍາ ທີ່ໄດ້ຕົກລົງກັນ.

**ມາດຕາ 17 ການກວດກາດ້ານເຕັກນິກ ການກໍ່ສ້າງ ແລະ ສ້ອມແປງ**

ການກວດກາເຕັກນິກການກໍ່ສ້າງ ແລະ ສ້ອມແປງ ຕ້ອງໄດ້ຜ່ານການຢັ້ງຢືນຄວາມຖືກຕ້ອງ ຂອງ ໂຄງການກໍ່ສ້າງ, ຮັບປະກັນທາງດ້ານຄຸນນະພາບ, ດ້ານມາດຕະຖານເຕັກນິກການກໍ່ສ້າງ ໃຫ້ມີປະສິດຕິພາບ, ຖືກຕ້ອງຕາມແບບແຜນຜັງກໍ່ສ້າງ ແລະ ໃບປະເມີນມູນຄ່າການກໍ່ສ້າງ ທີ່ໄດ້ກໍານົດໄວ້ໃນສັນຍາຮັບເໝົາ.

ເອກະສານ ການກວດກາເຕັກນິກການກໍ່ສ້າງ ຕ້ອງໄດ້ຮັບອະນຸມັດ ແລະ ຢັ້ງຢືນ ຈາກອົງການ ຄຸ້ມຄອງວຽກງານກໍ່ສ້າງ ແລະ ສ້ອມແປງ ຂອງຂະແໜງການສຶກສາ ແລະ ກິລາ ຫຼື ໜ່ວຍງານກໍ່ສ້າງ ຂັ້ນແຂວງ, ນະຄອນຫຼວງ ເພື່ອປະກອບໃສ່ເອກະສານ ຂໍອະນຸມັດຊໍາລະສະສາງ ໂຄງການກໍ່ສ້າງ ແລະ ສ້ອມແປງ ຕາມທີ່ກໍານົດ ໄວ້ໃນກົດໝາຍວ່າດ້ວຍ ການກໍ່ສ້າງ.

**ມາດຕາ 18 ການປະເມີນຜົນ ການກໍ່ສ້າງ ແລະ ສ້ອມແປງ**

ການປະເມີນຜົນ ການກໍ່ສ້າງ ແລະ ສ້ອມແປງ ໃຫ້ນໍາໃຊ້ເຄື່ອງມື ຮູບແບບຕ່າງໆ ລົງໄປປະເມີນຜົນຂອງ ການກໍ່ສ້າງ ຢູ່ພາກສະໜາມກໍ່ສ້າງ ເພື່ອປະເມີນວ່າການຈັດຕັ້ງປະຕິບັດ ໂຄງການກໍ່ສ້າງ ແລະ ສ້ອມແປງ ໄດ້ປະຕິບັດຕາມ ການອອກແບບ, ມາດຕະຖານເຕັກນິກ, ກໍານົດໝາຍເຕັກນິກ, ວັດສະດຸກໍ່ສ້າງ, ໃບປະເມີນ ມູນຄ່າການກໍ່ສ້າງ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງ ຕາມທີ່ໄດ້ກໍານົດໄວ້ ໃນສັນຍາຮັບເໝົາ ຢ່າງຖືກຕ້ອງ, ມີຄຸນນະພາບ ແລະ ຄວາມປອດໄພ.

## ໝວດທີ 6
## ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ເຈົ້າຂອງໂຄງການ ແລະ ຜູ້ຮັບເໝົາ

**ມາດຕາ 19 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງເຈົ້າຂອງໂຄງການ**

ເຈົ້າຂອງໂຄງການ ມີ ໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ຕົກລົງກະກຽມໂຄງການລົງທຶນຂອງລັດ;
2. ແຕ່ງຕັ້ງຄະນະຮັບຜິດຊອບໂຄງການ;
3. ປະເມີນຜົນ ບັນດາໂຄງການລົງທຶນຂອງລັດ ທີ່ຂຶ້ນກັບຂອບເຂດສິດຂອງຕົນ;
4. ຮັບຮອງແຜນການປະມູນ, ເອກະສານການປະມູນ, ຜົນຂອງການປະມູນ ແລະ ດໍາເນີນຕາມ ລະບຽບການຈັດຊື້-ຈັດຈ້າງ;
5. ຮັບປະກັນຄຸນນະພາບ ແລະ ລາຍຈ່າຍການລົງທຶນຕາມທີ່ໄດ້ຮັບຮອງ;
6. ນໍາສະເໜີກ່ຽວກັບການດັດແກ້, ໂຈະ, ຍ່ອຍທຶນ ແລະ ຍົກເລີກ ໂຄງການລົງທຶນຂອງລັດ;

7. ຈັດຕັ້ງການຕິດຕາມກວດກາ ການເຄື່ອນໄຫວຂອງຄະນະຮັບຜິດຊອບໂຄງການ ໃນໄລຍະການປະຕິບັດໂຄງການ;

8. ຊໍາລະມູນຄ່າໂຄງການທີ່ໄດ້ ຈັດຕັ້ງປະຕິບັດສໍາເລັດໃຫ້ແກ່ຜູ້ຮັບເໝົາ;

9. ຍົກເລີກສັນຍາກັບຜູ້ຮັບເໝົາ ໃນກໍລະນີຜູ້ຮັບເໝົາ ບໍ່ປະຕິບັດຕາມສັນຍາ;

10. ປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 20 ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ຮັບເໝົາ**

ຜູ້ຮັບເໝົາ ມີ ໜ້າທີ່ ແລະ ຄວາມຮັບຜິດຊອບ ດັ່ງນີ້:

1. ປະຕິບັດໂຄງການ ໃຫ້ສໍາເລັດຕາມມາດຕະຖານເຕັກນິກ ແລະ ກໍານົດເວລາໃນສັນຍາ;

2. ຮັບເງິນຄ່າໂຄງການທີ່ຕົນໄດ້ປະຕິບັດສໍາເລັດ ຈາກເຈົ້າຂອງໂຄງການຕາມສັນຍາ;

3. ຊີ້ແຈງ ແລະ ໃຫ້ຄໍາແນະນໍາ ເຈົ້າຂອງໂຄງການ, ຄະນະຮັບຜິດຊອບໂຄງການ ຫຼື ທີ່ປຶກສາໂຄງການ ທີ່ບໍ່ຖືກກັບມາດຕະຖານເຕັກນິກ ຊຶ່ງຈະເຮັດໃຫ້ໂຄງການນັ້ນບໍ່ມີຄຸນນະພາບ;

4. ປົກປັກຮັກສາ ພາຫະນະ, ວັດຖຸອຸປະກອນ ແລະ ວັດສະດຸກໍ່ສ້າງຕ່າງໆ ຂອງໂຄງການ.

## ໝວດທີ 7
## ຂໍ້ຫ້າມ

**ມາດຕາ 21 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ມີ ພຶດຕິກໍາ ດັ່ງນີ້:

1. ດໍາເນີນກິດຈະການ ອອກແບບ, ກໍ່ສ້າງ ແລະ ສ້ອມແປງ ໂດຍບໍ່ໄດ້ຮັບອະນຸຍາດ, ກໍ່ສ້າງບໍ່ຖືກຕາມແບບແຜນຜັງ ທີ່ໄດ້ຮັບອະນຸຍາດ ຫຼື ດັດແກ້ແບບແຜນຜັງ ໂດຍບໍ່ໄດ້ຮັບການເຫັນດີ ຈາກເຈົ້າຂອງໂຄງການ;

2. ດໍາເນີນກິດຈະການກໍ່ສ້າງ ແລະ ສ້ອມແປງ ຢູ່ໃນເຂດຫວງຫ້າມ ເພື່ອປົກປັກຮັກສາສິ່ງແວດລ້ອມ, ທໍາມະຊາດ-ສັງຄົມ ແລະ ເຂດທີ່ມີຄວາມສ່ຽງຕໍ່ໄພພິບັດຕ່າງໆ;

3. ທັບມ້າງ, ຕໍ່ເຕີມ, ທໍາລາຍສິ່ງປຸກສ້າງ ຫຼື ຊັບສິນ ສາທາລະນະ ແລະ ບຸກຄົນ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;

4. ຂົນສົ່ງວັດສະດຸກໍ່ສ້າງ ໂດຍບໍ່ສອດຄ່ອງກັບລະບຽບຂົນສົ່ງໃນຕົວເມືອງ ແລະ ບໍ່ຮັບປະກັນຄວາມປອດໄພ, ເຮັດໃຫ້ເກີດມີການຕົກເຮ່ຍ, ສ້າງຄວາມເປິະເປື້ອນໃສ່ໜ້າທາງ, ສະຖານທີ່ສາທາລະນະ ຫຼື ສະຖານທີ່ຂອງຜູ້ອື່ນ;

5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 22 ຂໍ້ຫ້າມສໍາລັບເຈົ້າຂອງໂຄງການ**

ຫ້າມເຈົ້າຂອງໂຄງການ ມີ ພຶດຕິກໍາ ດັ່ງນີ້:

1. ກີດໜ່ວງຖ່ວງດຶງ ຜູ້ຮັບເໝົາ ກ່ຽວກັບວິທີການ ແລະ ມາດຕະການແກ້ໄຂບັນຫາທີ່ເກີດຂຶ້ນໃນການອອກແບບ, ກໍ່ສ້າງ ແລະ ສ້ອມແປງ

2. ປ່ຽນແປງ ຫຼື ຍົກເລີກສັນຍາຕາມລໍາພັງຝ່າຍດຽວ;

3. ຂັດຂວາງການປະຕິບັດງານຂອງເຈົ້າໜ້າທີ່ ຫຼື ພະນັກງານທີ່ລົງກວດກາ;

4. ໃຫ້ສິນບົນ ແລະ ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ ທີ່ລົງກວດກາ;

5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 23 ຂໍ້ຫ້າມ ສໍາລັບຜູ້ຮັບເໝົາ ກໍ່ສ້າງ ແລະ ສ້ອມແປງ**

ຫ້າມຜູ້ຮັບເໝົາ ກໍ່ສ້າງ ແລະ ສ້ອມແປງ ມີ ພຶດຕິກໍາ ດັ່ງນີ້:

1. ນໍາໃຊ້ວັດສະດຸກໍ່ສ້າງທີ່ບໍ່ໄດ້ຜ່ານການກວດກາ ແລະ ຢັ້ງຢືນຄຸນນະພາບ ຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງ;

2. ສ້າງມົນລະພິດສິ່ງແວດລ້ອມ ແລະ ສັງຄົມ;

3. ບໍ່ໃຫ້ການຮ່ວມມືໃນການປະຕິບັດງານຂອງເຈົ້າໜ້າທີ່;

4. ໃຫ້ ຫຼື ຮັບສິນບົນ ແລະ ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່;

5. ປອມແປງເອກະສານຕ່າງໆກ່ຽວກັບການອອກແບບ, ກໍ່ສ້າງ ແລະ ສ້ອມແປງ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 24 ຂໍ້ຫ້າມສໍາລັບພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີ ພຶດຕິກໍາ ດັ່ງນີ້:

1. ຄົ້ນຄ້ວານໍາສະເໜີ ອອກອະນຸຍາດປຸກສ້າງ ຫຼື ເຫັນດີໃຫ້ມີການດັດແກ້ແບບ ໂດຍບໍ່ຖືກຕ້ອງ;

2. ກີດໜ່ວງຖ່ວງດຶງ ເອກະສານທີ່ມາຜ່ານ ບໍ່ປະຕິບັດຕາມໜ້າທີ່ຂອບເຂດສິດຂອງຕົນ ຫຼື ເມີນເສີຍຕໍ່ການກະທໍາອັນບໍ່ຖືກຕ້ອງ ຂອງຜູ້ທີ່ໄດ້ຮັບອະນຸຍາດ ຫຼື ຜູ້ຮັບເໝົາ;

3. ສົມຮູ້ຮ່ວມຄິດກັບຜູ້ໄດ້ຮັບອະນຸຍາດ ຫຼື ຜູ້ຮັບເໝົາ ເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວ ແລະ ພັກພວກໂດຍບໍ່ຊອບທໍາ ຫຼື ມີການລະເມີດ ກົດໝາຍ ແລະ ລະບຽບການ;

4. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ອົງການຄຸ້ມຄອງ ອອກແບບ, ກໍ່ສ້າງ ແລະ ສ້ອມແປງ

**ມາດຕາ 25 ອົງການຄຸ້ມຄອງ ອອກແບບ, ກໍ່ສ້າງ ແລະ ສ້ອມແປງ**

ອົງການຄຸ້ມຄອງ ອອກແບບ, ກໍ່ສ້າງ ແລະ ສ້ອມແປງ ຂອງຂະແໜງການສຶກສາທິການ ແລະ ກິລາ ປະກອບມີ ດັ່ງນີ້:

1. ກະຊວງສຶກສາທິການ ແລະ ກິລາ;
2. ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ;
3. ຫ້ອງການສຶກສາທິການ ແລະ ກິລາເມືອງ, ນະຄອນ;
4. ຄະນະພັດທະນາການສຶກສາຂັ້ນບ້ານ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງກະຊວງສຶກສາທິການ ແລະ ກິລາ**

ກະຊວງສຶກສາທິການ ແລະ ກິລາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ນິຕິກຳໃຕ້ກົດໝາຍ, ລະບຽບການ ທີ່ກ່ຽວຂ້ອງກັບການຄຸ້ມຄອງວຽກງານອອກແບບ, ກໍ່ສ້າງ ແລະ ສ້ອມແປງ ໃນຂະແໜງການສຶກສາທິການ ແລະ ກິລາ ເພື່ອນຳໄປຈັດຕັ້ງປະຕິບັດ ຢ່າງເປັນເອກະພາບກັນ;

2. ຄົ້ນຄວ້າ, ກຳນົດ ເງື່ອນໄຂ, ແບບມາດຕະຖານ ແລະ ມາດຕະຖານເຕັກນິກ ອາຄານການສຶກສາ, ຫ້ອງທົດລອງ, ຫ້ອງຝຶກປະຕິບັດ, ຫ້ອງສະໝຸດ, ຫ້ອງອ່ານ, ຫໍພັກ, ຫ້ອງນ້ຳ , ພື້ນຖານໂຄງລ່າງກິລາ-ກາຍຍະກຳ ແລະ ເຟີນີເຈີໂຮງຮຽນຂອງຂະແໜງການສຶກສາທິການ ແລະ ກິລາ;

3. ເຜີຍແຜ່ ແລະ ຊີ້ນຳການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງກັບການຄຸ້ມຄອງ ແລະ ກວດກາການອອກແບບ, ກໍ່ສ້າງ ແລະ ສ້ອມແປງ ພ້ອມທັງສະໜອງຂໍ້ມູນທີ່ຈຳເປັນ;

4. ປະສານງານຈັດຕັ້ງປະຕິບັດວຽກງານການປຸກສ້າງຂອງໂຄງການເງິນຊ່ວຍເຫຼືອລ້າ ແລະ ການກູ້ຢືມເຂົ້າໃນການພັດທະນາຂະແໜງການສຶກສາທິການ ແລະ ກິລາ;

5. ຄຸ້ມຄອງວຽກງານອອກແບບອາຄານສະຖານທີ່ຂອງຂະແໜງການສຶກສາທິການ ແລະ ກິລາ;

6. ກວດກາຜ່ານ ແລະ ຮັບຮອງກ່ຽວກັບການອອກອະນຸຍາດໃສ່ແບບເຕັກນິກຕ່າງໆ, ໃນປະເມີນມູນຄ່າການກໍ່ສ້າງ ແລະ ສ້ອມແປງ, ກຳນົດມາດຖານເຕັກນິກການນຳໃຊ້ວັດສະດຸກໍ່ສ້າງ ຂອງຂະແໜງການສຶກສາທິການ ແລະ ກິລາ ;

7. ພິຈາລະນາ ການອະນຸຍາດ ການກໍ່ສ້າງ ແລະ ສ້ອມແປງ ຂະໜາດໃຫຍ່ ຕາມຄວາມຮັບຜິດຊອບຂອງຕົນ;

8. ຄົ້ນຄວ້າ ພິຈາລະນາ, ມີຄຳເຫັນ ກ່ຽວກັບການສັ່ງໂຈະ ແລະ ຍົກເລີກການອອກອະນຸຍາດ ການກໍ່ສ້າງ ແລະ ສ້ອມແປງ ທີ່ມີການລະເມີດຕໍ່ກົດໝາຍ ແລະ ລະບຽບການ;

9. ສ້າງແຜນກຳນົດ, ຝຶກອົບຮົມ, ບຳລຸງຍົກລະດັບສ້າງຄວາມເຂັ້ມແຂງດ້ານສະຖາປັດຕະຍະກຳສາດ ແລະ ວິສະວະກຳສາດໃຫ້ໜ່ວຍງານກໍ່ສ້າງຂັ້ນແຂວງ ແລະ ຂັ້ນເມືອງ ຂອງຂະແໜງການສຶກສາທິການ ແລະ ກິລາ;

10. ສ້າງຖານຂໍ້ມູນ ແລະ ເກັບກຳສະຖິຕິ ວຽກງານການ ອອກແບບ, ກໍ່ສ້າງ ແລະ ສ້ອມແປງ ຂອງຂະແໜງການສຶກສາທິການ ແລະ ກິລາ;

11. ຄຸ້ມຄອງວຽກງານປົກປັກຮັກສາລະບົບພື້ນຖານໂຄງລ່າງທາງດ້ານເຕັກນິກຂອງອາຄານສະຖານທີ່ໃນຂະແໜງການສຶກສາທິການ ແລະ ກິລາ;

12. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວວຽກງານການອອກແບບ, ກໍ່ສ້າງ ແລະ ສ້ອມແປງ ຂັ້ນສູນກາງ ຮອດ ຂັ້ນທ້ອງຖິ່ນ ພ້ອມທັງ ສະຫຼຸບ ລາຍງານໃຫ້ ຂັ້ນເທິງຮັບຊາບເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ**

ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ, ເຜີຍແຜ່, ນຳພາ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ແລະ ສະໜອງຂໍ້ມູນຂ່າວສານທີ່ຈຳເປັນ ທີ່ກ່ຽວຂ້ອງກັບການຄຸ້ມຄອງວຽກງານອອກແບບ, ກໍ່ສ້າງ ແລະ ສ້ອມແປງ;

2. ຈັດຕັ້ງປະຕິບັດ ແລະ ນຳໃຊ້ ເງື່ອນໄຂ, ແບບມາດຕະຖານ ແລະ ມາດຕະຖານເຕັກນິກ ອາຄານການສຶກສາ, ຫ້ອງທົດລອງ, ຫ້ອງຝຶກປະຕິບັດ, ຫ້ອງສະໝຸດ, ຫ້ອງອ່ານ, ຫໍພັກ, ຫ້ອງນ້ຳ , ພື້ນຖານໂຄງລ່າງກິລາ-ກາຍຍະກຳ ແລະ ເຟີນີເຈີໂຮງຮຽນຂອງຂະແໜງການສຶກສາທິການ ແລະ ກິລາ;

3. ພິຈາລະນາ ຄົ້ນຄວ້າ ການກໍ່ສ້າງ ແລະ ສ້ອມແປງ ຂະໜາດກາງ ນຳສະເໜີຕໍ່ຂັ້ນເທິງ;

4. ຄົ້ນຄວ້າ, ມີຄຳເຫັນ ກ່ຽວກັບການສັ່ງໂຈະ ແລະ ຍົກເລີກການອອກອະນຸຍາດ ການກໍ່ສ້າງ ແລະ ສ້ອມແປງ ທີ່ມີການລະເມີດຕໍ່ກົດໝາຍ ແລະ ລະບຽບການ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

5. ສ້າງແຜນກຳນົດ, ຝຶກອົບຮົມ, ບຳລຸງຍົກລະດັບສ້າງຄວາມເຂັ້ມແຂງດ້ານສະຖາປັດຕະຍະກຳສາດ ແລະ ວິສະວະກຳສາດໃຫ້ໜ່ວຍງານຂັ້ນເມືອງ;

6. ສັງລວມຂໍ້ມູນ ແລະ ເກັບກຳສະຖິຕິ ວຽກງານການອອກແບບ, ກໍ່ສ້າງ ແລະ ສ້ອມແປງ;

7. ຄຸ້ມຄອງວຽກງານປົກປັກຮັກສາລະບົບພື້ນຖານໂຄງລ່າງທາງດ້ານເຕັກນິກຂອງອາຄານສະຖານທີ່;

8. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວວຽກງານການອອກແບບ, ກໍ່ສ້າງ ແລະ ສ້ອມແປງ ພ້ອມທັງ ສະຫຼຸບລາຍງານໃຫ້ຂັ້ນເທິງຮັບຊາບເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 28 ສິດ ແລະ ໜ້າທີ່ ຂອງຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ , ນະຄອນ**

ຫ້ອງການສຶກສາກິລາເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ, ເຜີຍແຜ່, ນຳພາ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ແລະ ສະໜອງຂໍ້ມູນຂ່າວສານທີ່ຈຳເປັນ ທີ່ກ່ຽວຂ້ອງກັບການຄຸ້ມຄອງວຽກງານອອກແບບ, ກໍ່ສ້າງ ແລະ ສ້ອມແປງ;

2. ຈັດຕັ້ງປະຕິບັດ ແລະ ນຳໃຊ້ ເງື່ອນໄຂ, ແບບມາດຕະຖານ ແລະ ມາດຕະຖານເຕັກນິກ ອາຄານການສຶກສາ, ຫ້ອງທົດລອງ, ຫ້ອງຝຶກປະຕິບັດ, ຫ້ອງສະໝຸດ, ຫ້ອງອ່ານ, ຫໍພັກ, ຫ້ອງນ້ຳ, ພື້ນຖານໂຄງລ່າງກິລາ-ກາຍຍະກຳ ແລະ ເຟີນີເຈີໂຮງຮຽນຂອງຂະແໜງການສຶກສາທິການ ແລະ ກິລາ;

3. ພົວພັນ, ປະສານສົມທົບ ແລະ ຂໍຄຳເຫັນ ນຳພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຂອງຕົນ;

4. ຄົ້ນຄວ້າ, ມີຄຳເຫັນ ກ່ຽວກັບການສັ່ງໂຈະ ແລະ ຍົກເລີກການອອກອະນຸຍາດ ການກໍ່ສ້າງ ແລະ ສ້ອມແປງ ທີ່ມີການລະເມີດຕໍ່ກົດໝາຍ ແລະ ລະບຽບການ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

5. ສັງລວມຂໍ້ມູນ ແລະ ເກັບກຳສະຖິຕິ ວຽກງານການອອກແບບ, ກໍ່ສ້າງ ແລະ ສ້ອມແປງ;

6. ຄຸ້ມຄອງວຽກງານປົກປັກຮັກສາລະບົບພື້ນຖານໂຄງລ່າງທາງດ້ານເຕັກນິກຂອງອາຄານສະຖານທີ່;

7. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວວຽກງານການອອກແບບ, ກໍ່ສ້າງ ແລະ ສ້ອມແປງ ພ້ອມທັງ ສະຫຼຸບລາຍງານໃຫ້ຂັ້ນເທິງ ຮັບຊາບເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງຄະນະພັດທະນາການສຶກສາຂັ້ນບ້ານ**

ຄະນະພັດທະນາການສຶກສາຂັ້ນບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່, ນຳພາ ການຈັດຕັ້ງປະຕິບັດ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ແລະ ສະໜອງຂໍ້ມູນຂ່າວສານທີ່ຈຳເປັນ ທີ່ກ່ຽວຂ້ອງກັບການຄຸ້ມຄອງວຽກງານອອກແບບ, ກໍ່ສ້າງ ແລະ ສ້ອມແປງ;

2. ພົວພັນ, ປະສານສົມທົບ, ປຸກລະດົມປະຊາຊົນ ແລະ ຂໍຄຳຄິດຄຳເຫັນ ນຳພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຂອງຕົນ;

3. ສະຫຼຸບ ແລະ ລາຍງານໃຫ້ຂັ້ນເທິງ ຮັບຊາບເປັນປົກກະຕິ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມມອບໝາຍຂອງຂັ້ນເທິງ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

**ມາດຕາ 30 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຜົນງານດີເດັ່ນໃນການຮ່ວມມື, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 31 ມາດຕະການ ຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ລະເມີດ ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໄໝ, ຮັບຜິດຊອບຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 32 ການຈັດຕັ້ງປະຕິບັດ**

ເພື່ອເປັນບ່ອນອີງ ໃນການຈັດຕັ້ງປະຕິບັດການຄຸ້ມຄອງອອກແບບ, ກໍ່ສ້າງ ແລະ ສ້ອມແປງ ໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ ມອບໃຫ້ກົມການເງິນ ກະຊວງ ສຶກສາທິການ ແລະ ກິລາ ປະສານສົມທົບກັບ ອົງການຄຸ້ມຄອງ ອອກແບບ, ກໍ່ສ້າງ ແລະ ສ້ອມແປງ ແຕ່ລະຂັ້ນ ແລະ ພາກສ່ວນທີ່ກ່ຽວຂ້ອງ, ໂຄສະນາ, ເຜີຍແຜ່, ແນະນຳການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 33 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ ວັນທີ 23 ກຸມພາ 2023 ເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງສຶກສາທິການ ແລະ ກິລາ
ລັດຖະມົນຕີ

ຮສ.ປອ ພຸດ ສິມມາລາວົງ